

# 7 ວັນ 6 ຄືນ ຢູ່ເຂດປະສົບໄພແຜ່ນດິນໄຫວຂອງມຽນມາ

ເວລາປະມານ 14 ໂມງ 50 ນາທີ ຂອງວັນທີ 6 ເມສາ 2025, ໜ່ວຍງານແພດຊ່ວຍເຫຼືອຢຸນນານແຫ່ງ ສປ ຈີນ ທັງໝົດ 37 ຄົນ ໄດ້ສຳເລັດໜ້າທີ່ຊ່ວຍເຫຼືອໄພແຜ່ນດິນໄຫວ ຢູ່ມຽນມາ ແລະ ເດີນທາງຈາກນະຄອນຢາງກຸງຂອງມຽນມາ ກັບຄືນນະຄອນຄຸນໝິງ ແຂວງຢຸນນານ.

ວັນທີ 28 ມີນາຜ່ານມາ, ມຽນມາ ເກີດໄພແຜ່ນດິນໄຫວ ຂະໜາດ 7,9 ຣິກເຕີ ເຊິ່ງເຮັດໃຫ້ທົ່ວໂລກເອົາໃຈໃສ່ຢ່າງກວ້າງຂວາງ. ເວລາປະມານ 7 ໂມງຂອງວັນທີ 29 ມີນາຜ່ານມາ, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ເດີນທາງໄປເຖິງນະຄອນຢາງກຸງຂອງມຽນມາ ເຊິ່ງເປັນໜ່ວຍງານຊ່ວຍເຫຼືອສາກົນໜ່ວຍທຳອິດ ທີ່ເດີນທາງໄປເຖິງມຽນມາ. ເວລາ 18 ໂມງ 30 ນາທີຂອງມື້ດຽວກັນ ໂດຍຜ່ານຈາກການເດີນທາງເປັນເວລາ 9 ຊົ່ວໂມງປາຍ, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ເດີນທາງຈາກນະຄອນຢາງກຸງໄປເຖິງນະຄອນຫຼວງເນປີດໍຂອງມຽນມາ ແລະ ດຳເນີນການຊ່ວຍເຫຼືອຮ່ວມກັບກຳລັງຊ່ວຍເຫຼືອທ້ອງຖິ່ນໃນທັນທີ. ຕະຫຼອດເວລາ 7 ວັນ 6 ຄືນ ຢູ່ເຂດປະສົບໄພພິບັດແຜ່ນດິນໄຫວ, ໜ່ວຍງານແພດຊ່ວຍເຫຼືອດັ່ງກ່າວ ໄດ້ຍາດແຍ່ງທຸກເວລານາທີ ເພື່ອກອບກູ້ຊ່ວຍເຫຼືອປະຊາຊົນຜູ້ປະສົບໄພ.



## ຍາດແຍ່ງທຸກເວລານາທີ ເພື່ອກອບກູ້ຊ່ວຍເຫຼືອປະຊາຊົນຜູ້ປະສົບໄພ

"ຕ້ອງຍາດທຸກເວລານາທີກອບກູ້ຊ່ວຍເຫຼືອຜູ້ປະສົບໄພ, ພວກເຮົາ ຈະບໍ່ຕ້ອງການພັກຜ່ອນ!" ພາຍຫຼັງເດີນທາງໄປເຖິງນະຄອນຫຼວງເນປີດໍແລ້ວ, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ດຳເນີນການຊ່ວຍເຫຼືອຢູ່ໂຮງໝໍໂອດາລາຕີລີ ຂອງນະຄອນຫຼວງເນປີດໍ ໃນທັນທີ. ສະມາຊິກທຸກຄົນລ້ວນແຕ່ຍາດເວລາໄປກອບກູ້ຊ່ວຍເຫຼືອຜູ້ປະສົບໄພ ທີ່ຄ້າງຢູ່ກ້ອງຊາກອາຄານຂອງໂຮງໝໍຈົນສຸດຄວາມສາມາດ.

ເວລາ 4 ໂມງ 56 ນາທີ ຂອງວັນທີ 30 ມີນາ ຜ່ານມາ, ພາຍຫຼັງໄດ້ຂຸດຄົ້ນຢ່າງລະອຽດເປັນເວລາເກືອບ 4 ຊົ່ວໂມງ, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ກອບກູ້ຊ່ວຍເຫຼືອແມ່ເຖົ້າຄົນໜຶ່ງ ທີ່ຖືກຄ້າງຢູ່ກ້ອງຊາກອາຄານຂອງໂຮງໝໍ.

ນີ້ແມ່ນປະຊາຊົນຜູ້ປະສົບໄພຜູ້ທຳອິດ ທີ່ໄດ້ຮັບການກອບກູ້ຊ່ວຍເຫຼືອຈາກໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ. ແມ່ເຖົ້າຄົນນີ້ ຖືກຕິກຄ້າງຢູ່ກ້ອງຊາກອາຄານເກືອບ 40 ຊົ່ວໂມງ. ພາຍຫຼັງແມ່ເຖົ້າຄົນນີ້ ຖືກກອບກູ້ອອກມາ, ໜ່ວຍງານແພດໄດ້ສົ່ງເພິ່ນ ເຂົ້າໄປປິ່ນປົວຢູ່ໃນລົດພະຍາບານ, ທຸກຄົນລ້ວນແຕ່ຕື່ນເຕັ້ນດີໃຈນຳ.

ນະຄອນຫຼວງເນປີດໍຂອງມຽນມາ ມີປະຊາກອນປະມານ 1,29 ລ້ານຄົນ ເຊິ່ງໄດ້ປະສົບໄພແຜ່ນດິນໄຫວຢ່າງໜັກໜ່ວງ. ຢູ່ໂຮງໝໍໂອດາລາຕີລີ, ຕຶກ 3 ຊັ້ນ ຖືກທຳລາຍຢ່າງໜັກໜ່ວງ, ຢູ່ຊັ້ນໜຶ່ງຫຍຸບຫຼາຍບ່ອນ, ເຮັດໃຫ້ຫຼາຍຄົນຖືກຝັງຢູ່ກ້ອງຊາກອາຄານ. ໜ່ວຍງານແພດຊ່ວຍເຫຼືອໄດ້ຄົ້ນພົບແມ່ເຖົ້າຄົນນີ້ຢູ່ກ້ອງຊາກອາຄານ ດ້ວຍເຄື່ອງແທກຊີວິດ.

ຕະຫຼອດເວລາ 7 ວັນ 6 ຄືນຢູ່ນະຄອນຫຼວງເນປີດໍຂອງມຽນມາ, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ຍາດທຸກເວລານາທີ ເພື່ອດຳເນີນການກອບກູ້ຊ່ວຍເຫຼືອທັງເວັນທັງຄືນ. ເໝືອນດັ່ງຄຳເວົ້າຂອງທ່ານມູຊູຢວນ (Mu Shuyuan) ຫົວໜ້າໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ວ່າ: "ເຖິງຈະມີຄວາມຫວັງພຽງ 1% ກໍຕາມ, ແຕ່ພວກເຮົາ ກໍຈະພະຍາຍາມຈົນສຸດຄວາມສາມາດ 100%. ນີ້ແມ່ນນ້ຳໃຈຊ່ວຍເຫຼືອ ທີ່ພວກເຮົາຍຶດໝັ້ນມາໂດຍຕະຫຼອດ."

## ກອບກູ້ຊ່ວຍເຫຼືອ ໃນທຸກວິນາທີ

ໃນຂະນະທີ່ ໜ່ວຍງານແພດຊ່ວຍເຫຼືອຄົ້ນຫາຊີວິດໃນທຸກເວລານາທີ, ວຽກງານກອບກູ້ຊ່ວຍເຫຼືອທາງການແພດ ແລະ ການປ້ອງກັນຄວບຄຸມສະພາບການແຜ່ລະບາດຂອງພະຍາດຫຼັງໄພພິບັດ ກໍເປັນໜ້າທີ່ຮີບດ່ວນທີ່ສຸດ.

ຕອນເຊົ້າວັນທີ 31 ມີນາຜ່ານມາ, ຄົນເຈັບ ແລະ ປະຊາຊົນຜູ້ປະສົບໄພ ໄດ້ຮັບການປິ່ນປົວຢູ່ໃນເຕັ້ນທີ່ກາງຂຶ້ນຊົ່ວຄາວຢູ່ຕາມເດີ່ນຈອດລົດຂອງໂຮງໝໍພັນຕຽງ. ສະມາຊິກໜ່ວຍງານແພດຊ່ວຍເຫຼືອຢຸນນານໄດ້ເຮັດວຽກຢ່າງຊຽວຊານຢູ່ແຫ່ງນີ້.

ນັບແຕ່ເກີດໄພແຜ່ນດິນໄຫວເປັນຕົ້ນມາ, ອຸນຫະພູມຢູ່ມຽນມາ ໄດ້ສູງເຖິງ 40 ອົງສາເປັນເວລາຫຼາຍມື້ຕິດຕໍ່ກັນ ເຊິ່ງເຮັດໃຫ້ວຽກງານປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ ຫຼັງໄພພິບັດ ປະເຊີນໜ້າກັບສະພາບການທີ່ຊຽວຊານທີ່ສຸດ. ເພື່ອຮັບປະກັນເງື່ອນໄຂພື້ນຖານຂອງອົງການແພດທ້ອງຖິ່ນ, ຕອນເຊົ້າວັນທີ 31 ມີນາຜ່ານມາ, ໜ່ວຍງານແພດຊ່ວຍເຫຼືອຢຸນນານຈີນໄດ້ດຳເນີນການກວດກາຄຸນນະພາບນ້ຳກິນ ແລະ ນ້ຳໃຊ້ສຸກເສີນ ຂອງໂຮງໝໍພັນຕຽງ ເພື່ອຮັບປະກັນຄວາມປອດໄພໃນດ້ານການໃຊ້ນ້ຳ.

ເພື່ອຫຼຸດຜ່ອນຄວາມສ່ຽງດ້ານການແຜ່ລະບາດຂອງພະຍາດຫຼັງໄພແຜ່ນດິນໄຫວ, ຕອນເຊົ້າວັນທີ 1 ເມສານີ້, ໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ໄດ້ເດີນທາງໄປຈຸດຈັດສັນຢູ່ໂຮງໝໍ 50 ຕຽງ ແລະ ສະໜາມບານຈາບູດີເຣດນາຂອງນະຄອນຫຼວງເນປີດໍ ເພື່ອກວດກາ ແຫຼ່ງນ້ຳ ແລະ ຮັບປະກັນຄວາມປອດໄພດ້ານນ້ຳກິນ.

ຢູ່ໂຮງໝໍ 50 ຕຽງ, ສະມາຊິກໜ່ວຍງານແພດ ທັງໄດ້ກວດກາຄຸນນະພາບນ້ຳ, ທັງແຈ້ງເຕືອນ ໃຫ້ຄົນທັງຫຼາຍຄວນເອົາໃຈໃສ່ຄວາມປອດໄພດ້ານອາຫານການກິນ ແລະ ນ້ຳ. ຖ້າມີຄົນປະກົດມີອາການຖອກທ້ອງ, ຄີງຮ້ອນ ແລະອື່ນໆ, ຕ້ອງລາຍງານ ແລະ ແກ້ໄຂໃນທັນທີ, ພ້ອມທັງປ້ອງກັນບໍ່ໃຫ້ຍຸງກັດ ຫຼື ວິນແດດ.

ທ່ານໝໍ ທຸນຕິງ ຜູ້ຮັບຜິດຊອບສູນປ້ອງກັນ ແລະ ຄວບຄຸມພະຍາດມຽນມາບອກນັກຂ່າວວ່າ: ຂໍສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງຈີນ. ພວກທ່ານ ໄດ້ເດີນທາງມາຊ່ວຍເຫຼືອມຽນມາ ຢ່າງທັນການ ເຊິ່ງໄດ້ເຮັດໃຫ້ເງື່ອນໄຂການຊ່ວຍເຫຼືອ ແລະ ປິ່ນປົວພະຍາດ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

## ຈົ່ງສືບທອດ ມິດຕະພາບຕະຫຼອດໄປ

ວັນທີ 3 ເມສານີ້, ໜ່ວຍງານແພດຊ່ວຍເຫຼືອຢຸນນານຈີນ, ອົງການດັບເພີງແຫ່ງຊາດມຽນມາ ແລະ ກຳລັງການຊ່ວຍເຫຼືອສຸກເສີນທ້ອງຖິ່ນມຽນມາ ໄດ້ແລກປ່ຽນເຕັກນິກຊ່ວຍເຫຼືອໃນເວລາເກີດໄພແຜ່ນດິນໄຫວ, ທ່ານ ອູບິພິວອູ ເຈົ້າໜ້າທີ່ອົງການດັບເພີງແຫ່ງຊາດມຽນມາ ກ່າວວ່າ: ພວກເຮົາ ຮູ້ສຶກພາກພູມໃຈ ແລະ ດີໃຈທີ່ສຸດ ທີ່ໄດ້ກອບກູ້ຊ່ວຍເຫຼືອແມ່ເຖົ້າຄົນນັ້ນອອກມາ.

ກ່ອນໜ້ານີ້, ໜ່ວຍງານແພດຊ່ວຍເຫຼືອຢຸນນານຈີນ, ອົງການດັບເພີງແຫ່ງຊາດມຽນມາ ແລະ ກຳລັງການຊ່ວຍເຫຼືອສຸກເສີນທ້ອງຖິ່ນມຽນມາ ໄດ້ຮ່ວມກັນກອບກູ້ຊ່ວຍເຫຼືອແມ່ເຖົ້າຄົນໜຶ່ງ ທີ່ຖືກຄ້າງຢູ່ກ້ອງຊາກອາຄານ ໄພແຜ່ນດິນໄຫວອອກມາ.

ປັດຈຸບັນ, ສະມາຊິກໜ່ວຍງານຊ່ວຍເຫຼືອຂອງຈີນ ແລະ ມຽນມາໄດ້ຈັບມືກັນ ແລະ ຮ່ວມກັນໃຫ້ຄຳໝັ້ນສັນຍາຮ່ວມຂອງວິລະພົນຂອງຈີນ ແລະ ມຽນມາ ທີ່ໄດ້ຮ່ວມກັນເຝົ້າຮັກສາຊີວິດຂອງປະຊາຊົນຢ່າງສຸດຂີດ.

ທ່ານ ອູບິພິວອູ ກ່າວວ່າ: ໃນການຊ່ວຍເຫຼືອ, ໜ່ວຍງານຊ່ວຍເຫຼືອຈີນ ແລະ ມຽນມາ ໄດ້ນຳໃຊ້ອຸປະກອນທັນສະໄໝຮ່ວມກັນ ເຊິ່ງເຮັດໃຫ້ຕົນໄດ້ສຳຜັດກັບກຳລັງວັງຊາຂອງວິທະຍາສາດເຕັກໂນໂລຊີ ໃນການຊ່ວຍເຫຼືອໄພ. ໃນການແລກປ່ຽນຄວາມເຫັນ, ທ່ານ ອູມິວ ຫົວໜ້າອົງການດັບເພີງແຫ່ງຊາດມຽນມາ ໄດ້ຈັບມືສະແດງຄວາມຂອບໃຈ ຕໍ່ສະມາຊິກໜ່ວຍງານແພດຊ່ວຍເຫຼືອຢຸນນານ ຈີນ ແລະ ກ່າວວ່າ: ເລີ່ແຕ່ມື້ທຳອິດທີ່ໜ່ວຍງານແພດຊ່ວຍເຫຼືອຢຸນນານຈີນ ເດີນທາງມາເຖິງນະຄອນຫຼວງເນປີດໍ, ພວກທ່ານ ກໍໄດ້ເຂົ້າຮ່ວມວຽກງານກອບກູ້ຊ່ວຍເຫຼືອໃນທຸກເວລາ. ພວກເຮົາ ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ພວກທ່ານ ທີ່ໄດ້ເດີນທາງມາຊ່ວຍເຫຼືອມຽນມາ!

ສະມາຊິກໜ່ວຍງານແພດຈີນ ກ່າວວ່າ: ພວກເຮົາ ພຽງແຕ່ໄດ້ເຮັດເລື່ອງທີ່ເຮົາຄວນເຮັດ, ຈະພະຍາຍາມຈົນສຸດຄວາມສາມາດ ເພື່ອຊ່ວຍເຫຼືອມຽນມາ. ຫວັງວ່າ, ຜ່ານຈາກການແລກປ່ຽນເຊິ່ງກັນແລະ ກັນ ເພື່ອຍົກລະດັບຂອງພວກເຮົາ ໃຫ້ສູງຂຶ້ນ ແລະ ສືບທອດມິດຕະພາບ ລະຫວ່າງ ສອງຝ່າຍຕະຫຼອດໄປ.

ບົດໂດຍ: Zhang Yinglin
ນັກຂ່າວສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)




ynzhanba@163.com
laos.yunnangateway.com